ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ໜ່ວຍ19 ຖະໜົນໄກສອນພົມວິຫານ ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

## ລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

## ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ")

**ປະຊຸມໃນວັນທີ** 29 ພຶດສະພາ 2018

**ສະຖານທີ່ປະຊຸມ** ຫ້ອງປະຊຸມ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ , ຕັ້ງຢູ່ເຮືອນເລກທີ 628 ໜ່ວຍ19 ຖະໜົນໄກສອນພົມວິຫານ ບ້ານໂພນພະເນົາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

**ຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ**

| | | |
|---|---|---|
| 1. ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ ຕາງໜ້າໂດຍ ທ່ານ ມານົບ ຕຣີລິດວິໄລ | ຈຳນວນຫຸ້ນທີ່ຖື | 27.088.000 ຮຸ້ນ |
| 2. ທ່ານ ນາງ ອິນທະວິໄລ ອຸດົມ | ຈຳນວນຫຸ້ນທີ່ຖື | 671.912 ຮຸ້ນ |
| 3. ທ່ານ ນາງ ທະນົງລັກ ອຸດົມ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 4. ທ່ານ ທະນົງສັກ ອຸດົມ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 5. ທ່ານ ສັງຄົມ ຈັນສຸກ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 6. ທ່ານ ຊາຄຣິດ ນັກສອນ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 7. ທ່ານ ນາງ ປຣາດຖະໜາ ນັກສອນ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 8. ທ່ານ ນາງ ຈິດຕິມາ ນັກສອນ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 9. ທ່ານ ນາງ ສຸທິດາ ນັກສອນ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 10. ທ່ານ ກຽງໄກ ນິດສະຍັນ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 11. ທ່ານ ມານົບ ຕຣີລິດວິໄລ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 12. ທ່ານ ທອງຖະຫວັນ ທອງແຖມ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |
| 13. ທ່ານ ຊັດພົນໄຊ ປັນຍາທຳບະດີ | ຈຳນວນຫຸ້ນທີ່ຖື | 8 ຮຸ້ນ |

ລວມ ຈຳນວນຜູ້ເຂົ້າຮ່ວມກອງປະຊຸມ 13 ທ່ານຈຳນວນຫຸ້ນທີ່ຖື 27.760.000 ຮຸ້ນ

**ເລີ່ມກອງປະຊຸມ ເວລາ 10:10 ໂມງ**

ກອງປະຊຸມໄດ້ແຕ່ງຕັ້ງໃຫ້ທ່ານ ຊາຄຣິດ ນັກສອນ ໃນຖານະປະທານສະພາບໍລິຫານຂອງ ບໍລິສັດ ເປັນປະທານກອງປະຊຸມ ໂດຍປະທານກອງປະຊຸມໄດ້ກ່າວຕ້ອນຮັບຜູ້ຖືຮຸ້ນທຸກທ່ານ ແລະ ແຈ້ງໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຊາບວ່າ: ກອງປະຊຸມຜູ້ຖືຮຸ້ນໃນຄັ້ງນີ້ມີຜູ້ເຂົ້າຮ່ວມ ຈຳນວນ 13

ທ່ານ ມີຈຳນວນຮຸ້ນລວມກັນ ຈຳນວນ 27.760.000 ຫຸ້ນ ຄິດເປັນສັດສ່ວນ 100 ສ່ວນຮ້ອຍຂອງຮຸ້ນທັງໝົດ ຖືວ່າຄົບຈຳນວນອົງປະຊຸມຕາມກົດໝາຍ ຈຶ່ງຂໍເປີດກອງປະຊຸມ ແລະ ດຳເນີນກອງປະຊຸມຕາມວາລະທີ່ໄດ້ແຈ້ງໄວ້ໃນໜັງສືເຊີນຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ ດັ່ງລຸ່ມນີ້:

**ວາລະທີ່ 1 ຮັບຮອງລາຍງານກອງປະຊຸມຄັ້ງທີ່ຜ່ານມາ**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ່ 1 ປະຈຳປີ 2018 ທີ່ປະຊຸມເມື່ອວັນທີ 9 ມີນາ 2018.

**<u>ມະຕິໃນກອງປະຊຸມ</u>**: ກອງປະຊຸມມີມະຕິຮັບຮອງລາຍງານກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ່ 1 ປະຈຳປີ 2018 ທີ່ປະຊຸມ ເມື່ອວັນທີ 9 ມີນາ 2018.

**ວາລະທີ່ 2 ພິຈາລະນາຮັບຊາບຜົນການດຳເນີນງານຂອງບໍລິສັດໃນຮອບປີ 2017**

ປະທານກອງປະຊຸມ ໄດ້ລາຍງານຜົນການດຳເນີນງານຂອງບໍລິສັດໃນຮອບປີ 2017 ລາຍລະອຽດຕາມເອກະສານປະກອບທີ່ໄດ້ສົ່ງໃຫ້ຜູ້ຖືຮຸ້ນທຸກທ່ານແລ້ວ ໂດຍມີເນື້ອໃນສຳຄັນ ດັ່ງນີ້:

- ຈຳນວນສິນເຊື່ອລາຍໃໝ່ທີ່ອະນຸມັດໃນປີ ຈຳນວນ 3.720 ສັນຍາ

| | | |
|---|---|---|
| • ລາຍຮັບລວມ | 17.219.995.664 | ກີບ |
| • ລາຍຈ່າຍລວມ | 10.324.744.804 | ກີບ |
| • ກຳໄລກ່ອນອາກອນ | 6.895.250.860 | ກີບ |
| • ອາກອນ | 1.456.527.931 | ກີບ |
| • ກຳໄລຫຼັງອາກອນ | 5.438.722.929 | ກີບ |
| • ຊັບສິນລວມ | 52.300.916.038 | ກີບ |
| • ໜີ້ສິນລວມ | 13.049.255.164 | ກີບ |
| • ສ່ວນຂອງຜູ້ຖືຮຸ້ນ: | | |
| - ທຶນຈົດທະບຽນ | 27.760.000.000 | ກີບ |
| - ສຳຮອງຕາມກົດໝາຍ | 1.784.378.967 | ກີບ |
| - ກຳໄລສະສົມ | 9.707.281.907 | ກີບ |

**<u>ມະຕິໃນກອງປະຊຸມ</u>:** ກອງປະຊຸມມີມະຕິຮັບຊາບຜົນການດຳເນີນການຂອງບໍລິສັດໃນປີທີ່ຜ່ານມາ.

**ວາລະທີ່ 3 ພິຈາລະນາງົບສະແດງສະຖານະການເງິນ ແລະ ງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ສຳລັບຮອບປີບັນຊີສິ້ນສຸດໃນວັນທີ 31 ທັນວາ 2017.**

ປະທານກອງປະຊຸມ ໄດ້ລາຍງານງົບສະແດງສະຖານະການເງິນ ແລະ ງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ລາຍລະອຽດຕາມເອກະສານງົບການເງິນປະກອບທີ່ໄດ້ສົ່ງໃຫ້ຜູ້ຖືຮຸ້ນທຸກທ່ານແລ້ວ.

**<u>ມະຕິໃນກອງປະຊຸມ</u>**: ກອງປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນອະນຸມັດງົບສະແດງຖານະທາງການເງິນ ແລະ ງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ຮອບປີບັນຊີສິ້ນສຸດວັນທີ 31 ທັນວາ 2017.

**ວາລະທີ່ 4 ພິຈາລະນາຈັດສັນງົບກຳໄລຂາດທຶນທີ່ສະຫຼຸບຂອງບໍລິສັດ ແລະ ຈ່າຍເງິນປັນຜົນແກ່ຜູ້ຖືຮຸ້ນປະຈຳປີ 2017.**

ປະທານກອງປະຊຸມລາຍງານໃຫ້ທີ່ປະຊຸມຊາບວ່າ ຈາກຜົນການດຳເນີນການໃນ ປີທີ່ຜ່ານມາບໍລິສັດມີກຳໄລສຸດທິຈາກການດຳເນີນການ 5.438.722.929 ກີບ ສະເໜີຈັດສັນງົບກຳໄລປະຈຳປີ 2017 ດັ່ງລຸ່ມນີ້:

1. ຈັດສັນກຳໄລສຸດທິປະຈຳປີ ເປັນຄັງສຳຮອງຕາມລະບຽບການ ບໍ່ຕ່ຳກວ່າສິບສ່ວນຮ້ອຍຂອງກຳໄລສຸດທິປະຈຳປີ ເປັນຈຳນວນເງິນ 543.872.293 ກີບ ເຮັດໃຫ້ຄັງສຳຮອງຕາມລະບຽບການ ເມື່ອວັນທີ 31 ທັນວາ 2018 ລວມເປັນຈຳນວນເງິນ 1.784.378.967 ກີບ.
2. ຈ່າຍເງິນປັນຜົນຈາກກຳໄລສະສົມໃຫ້ແກ່ຜູ້ຖືຮຸ້ນ ຕາມວັນປິດປຶ້ມທະບຽນຜູ້ຖືຮຸ້ນ ໃນວັນທີ 21 ພຶດສະພາ 2018 ຊຶ່ງມີຈຳນວນຮຸ້ນທີ່ຊຳລະຄ່າຮຸ້ນຄົບຕາມມູນຄ່າຮຸ້ນແລ້ວ ຈຳນວນທັງໝົດ 27.760.000 ຮຸ້ນ, ຮຸ້ນລະ 220 ກີບ ເປັນຈຳນວນ 6.107.200.000 ກີບ ຊຶ່ງບໍລິສັດຕ້ອງຫັກພາສີ ຈຳນວນ 10 ສ່ວນຮ້ອຍ ຫຼື ເປັນຈຳນວນເງິນ 610.720.000 ກີບ ສ່ວນທີ່ເຫຼືອຈຳນວນ 5.496.480.000 ກີບ ຈ່າຍໃຫ້ແກ່ຜູ້ຖືຮຸ້ນ ໂດຍກຳນົດໃຫ້ຈ່າຍເງິນປັນຜົນ ໃນວັນທີ 10 ກັນຍາ 2018

**<u>ມະຕິໃນກອງປະຊຸມ</u>**: ກອງປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບກັນອະນຸມັດໃຫ້ຈັດສັນກຳໄລປະຈຳປີ 2017 ຕາມທີ່ປະທານສະເໜີມາ.

**ວາລະທີ່ 5 ເລືອກຕັ້ງຜູ້ອຳນວຍການ ແລະ ສະພາບໍລິຫານ**

ປະທານກອງປະຊຸມ ໄດ້ແຈ້ງສະເໜີໃຫ້ທີ່ປະຊຸມຮັບຊາບວ່າ: ຍັງບໍ່ມີອຳນວຍການທ່ານໃດຄົບຮອບວາລະ 2 ປີ ຫຼື ລາອອກຈາກຕຳແໜ່ງ ຈຶ່ງບໍ່ຈຳເປັນແຕ່ງຕັ້ງກຳມະການທົດແທນ ໂດຍໃຫ້ສະພາບໍລິຫານຊຸດປະຈຸບັນດຳເນີນການບໍລິຫານຈັດການຕໍ່ໄປໂດຍມີສິດ ແລະ ໜ້າທີ່ຕາມເດີມ.

**ມະຕິໃນທີ່ປະຊຸມ**: ທີ່ປະຊຸມມີມະຕິຕົກລົງເຫັນດີເປັນເອກະພາບຕາມທີ່ທ່ານປະທານສະເໜີ.

**ວາລະທີ່ 6 ເລື່ອງອື່ນໆ ( ຖ້າມີ )**

- ບໍ່ມີ -

ບໍ່ມີເລື່ອງອື່ນໃດ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 11:45 ໂມງ

**ລາຍເຊັນຮັບຮອງມະຕິກອງປະຊຸມ**

1. ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ (ຕາງໜ້າໂດຍ ທ່ານ ມານົບ ຕຣີລິດວິໄລ) ..............................
2. ທ່ານ ນາງ ອິນທະວິໄລ ອຸດດົມ ..............................
3. ທ່ານ ນາງ ທະນົງລັກ ອຸດົມ ..............................
4. ທ່ານ ທະນົງສັກ ອຸດົມ ..............................
5. ທ່ານ ສັງຄົມ ຈັນສຸກ ..............................
6. ທ່ານ ຊາຄຣິດ ນັກສອນ ..............................
7. ທ່ານ ນາງ ປຣາດຖະໜາ ນັກສອນ ..............................
8. ທ່ານ ນາງ ຈິດຕິມາ ນັກສອນ ..............................
9. ທ່ານ ນາງ ສຸທິດາ ນັກສອນ ..............................

<u>ລາຍເຊັນຮັບຮອງມະຕິກອງປະຊຸມ (ຕໍ່)</u>

10. ທ່ານ ກຽງໄກ ນິດສະຍັນ ........................

11. ທ່ານ ມານິບ ຕຣີລິດວິໄລ ........................

12. ທ່ານ ທອງຖະໜວັນ ທອງແຖມ ........................

13. ທ່ານ ຊັດພິນໄຊ ປັນຍາທຳປະດີ ........................

ລົງຊື່ຜູ້ບັນທຶກລາຍງານກອງປະຊຸມ

........................................................

ທ່ານນາງ ສະລັນຍາ ກະມົນສິນລະປະຈະເລີນ